**San Diego City Schools**

**Fact Sheet**

ລະດູໃບໄມ້ລົ່ນ 2005

# ໂຄງການຄອນເນັກຊັນ ການກັບເຂົ້າຄືນຂອງນັກຮຽນອອກໂຮງຮຽນກ່ອນ

## ຊອກຫາ, ຊັກຊວນ, ໃຫ້ການສຶກສາ

ເປົ້າໝາຍຂອງໂຄງການຄອນເນັກຊັນ ແມ່ນຊອກຫາພວກນັກຮຽນສູນການສຶກສາແຊນດິເອໂກ ປີທີ 7–12 ທຸກໆຄົນທີ່ບໍ່ມາໂຮງຮຽນ. ໂຄງການຄອນເນັກຊັນເປັນໂຄງການເຂດສຶກສາແຊນດິເອໂກ ແມ່ນໂຄງການປ້ອງກັນ ແລະ ນຳເອົານັກຮຽນທີ່ອອກໂຮງຮຽນກ່ອນຈົບກັບມາເຂົ້າໂຮງຮຽນຄືນ. ນັກຮຽນຈະໄດ້ຮັບການບູຮຽນເພື່ອຜ່ານຂ້າມແປດ–ອາທິດພ້ອມທັງມີເປົ້າໝາຍກັບເຂົ້າໂຮງຮຽນຄືນ. ໂຄງການນີ້ຕັ້ງຂຶ້ນ 1995 ຍ້ອນຄວາມມຸ້ງໝາຍຈະນຳເອົານັກຮຽນຜູ້ຢຸດມາໂຮງຮຽນນັ້ນກັບມາເຂົ້າໂຮງຮຽນ.

ພະນັກງານຂົນຂວາຍຂອງໂຄງການຄອນເນັກຊັນ ຖືກມອບໝາຍວຽກເພື່ອຊອກຮູ້ຄອບຄົວຂອງນັກຮຽນ, ແລ້ວຈັດເວລາເພື່ອໄປຢ້ຽມຢາມບ້ານ. ພະນັກງານຂົນຂວາຍມີຈຸດພິເສດເຮັດວຽກຕາມຄວາມຕ້ອງການຂອງນັກຮຽນ ແລະ ຄອບຄົວຂອງເຂົາເຈົ້າ ແລະ ໃນເວລາສືບສວນຢູ່ນັ້ນຈະຖືເປັນຄວາມລັບ ແລະ ເປັນເລື່ອງສ່ວນຕົວ. ເຂົາເຈົ້າປະຕິບັດງານຕາມວັກຕອນການຂອງການສືບສວນທີ່ມີຫຼັກຖານທີ່ຖືກຕ້ອງສຳຫລັບຊອກຫາພວກນັກຮຽນທີ່ຫລົງທາງໃນລະບົບຂອງການສຶກສານັ້ນ.

ຫລັງຈາກໄດ້ຮູ້ທີ່ຢູ່ຂອງຄອບຄົວນັກຮຽນແລ້ວ, ພະນັກງານຂົນຂວາຍຈະຈັດເວລາໄປຢ້ຽມຢາມບ້ານ ແລະ ເລີ່ມຈົດຊື່ລົງທະບຽນເຂົ້າໂຮງຮຽນ. ເຂົາເຈົ້າຈະຈັດນັກຮຽນໃສ່ໂຄງການສຶກສາຄອນເນັກຊັນນຶ່ງໃນສາມແຫ່ງ ຊຶ່ງຕັ້ງຢູ່ໃນເຂດສຶກສາແຊນດິເອໂກນີ້. ພວກນັກຮຽນຈະໄດ້ເຂົ້າຮ່ວມໃນການສຳຣວດສອບເສັງເພື່ອກຳນົດເງື່ອນໄຂໃນການສິດສອນວິຊາເລກ ແລະ ພາສາອັງກິດຂັ້ນຕໍ່ໄປ. ການສິດສອນວິຊາການຮຽນໃນໂຄງການຄອນເນັກຊັນນີ້ ໄດ້ອອກແບບເນັ້ນໜັກໃສ່ຄວາມຕ້ອງການພິເສດຂອງພວກໜຸ່ມນ້ອຍ–ທີ່ບໍ່ໄດ້ຢູ່ໃນໂຮງຮຽນ. ໂຄງການທີ່ຈັດສເນີແກ່ພວກນັກຮຽນ ມີອຸປະກອນການສິດສອນ ແລະ ວິທີການອັນສົມບູນດີ ເພື່ອກຽມເຂົາເຈົ້າຮຽນວິຊາການ ພ້ອມອົບຮົມດ້ານຈິດໃຈ ເພື່ອໃຫ້ເຂົາເຈົ້າສາມາດສືບຕໍ່ການສຶກສາຂອງເຂົາເຈົ້າໄດ້ດີ. ນອກນີ້, ຄູແນະນຳຍັງໄດ້ເຮັດວຽກກັບພວກນັກຮຽນ ເພື່ອກໍ່ສ້າງຄວາມຮູ້ທີ່ຈຳເປັນດ້ານສ່ວນຕົວ ແລະ ດ້ານສັງຄົມທີ່ເຮັດໃຫ້ເຂົາເຈົ້າກັບສູ່ການສຶກສາຖາວອນ ທີ່ຈັດສິດສອນຢ່າງດີໄວ້. ການສຳຣວດສອບເສັງວິຊາຊີບ ແລະ ການຮຽນວິຊາຊີບນັ້ນໄດ້ຈັດໄວ້ໃຫ້ ພ້ອມທັງການສິດສອນເພື່ອກຽມພ້ອມສຳຫລັບການເຮັດວຽກງານອີກດ້ວຍ. ພວກນັກຮຽນທີ່ປະສົງຢາກປະກອບວຽກງານນັ້ນ ກໍ່ມີການຊ່ວຍເຫລືອຊອກວຽກງານໃຫ້.

### ຂໍ້ສລູບ

**ຈຸດມຸ້ງໝາຍ**

ເພື່ອຊອກຫາພວກນັກຮຽນມັທຍົມຕົ້ນ ແລະ ມັທຍົມປາຍທຸກໆຄົນທີ່ບໍ່ມາເຂົ້າໂຮງຮຽນ ແລະ ກຽມໃຫ້ເຂົາເຈົ້າກັບເຂົ້າໂຮງຮຽນ ເພື່ອໃຫ້ເຂົາເຈົ້າເປັນຜູ້ໃຫຍ່ທີ່ມີການສຶກສາ ແລະ ມີຜົນສຳເຣັດອັນດີ.

❖ ຜ່ານການຕິດຕໍ່ພົວພັນກັບພໍ່ແມ່ແລະນັກຮຽນເຂົ້າຮ່ວມໃນໂຄງການ, ພວກເຮົາໄດ້ພົບພໍ້ຫລາຍຢ່າງໃນເຫດຜົນການອອກໂຮງຮຽນກ່ອນຈົບນີ້. ນັກຮຽນອອກໂຮງຮຽນກ່ອນຈົບສ່ວນຫລາຍ:

- ຮູ້ສຶກບໍ່ຢາກເຂົ້າຮຽນຍ້ອນຜູ້ໃຫຍ່ໃນໂຮງຮຽນ
- ຮຽນຫລ້າຫລັງຢູ່ໃນໂຮງຮຽນປີນຶ່ງ ຫລື ຫລາຍໆປີ
- ມີແຜນການນ້ອຍ ຫລື ມີແຜນການບໍ່ດີດ້ານອາຊີບ ຫລື ແຜນຮຽນວິຊາຊີບ
- ໄດ້ຮັບການສົ່ງເສີມທາງດີນ້ອຍ ຈາກຜູ້ໃຫຍ່ທີ່ມີສ່ວນກ່ຽວຂ້ອງຊີວິດຂອງເຂົາເຈົ້າ
- ມາຈາກຄອບຄົວທີ່ລ້ຽງລູກຄົນດຽວ
- ເປັນເດັກດີຢູ່ໃນໂຮງຮຽນສູງເກີນຂັ້ນສເລ່ຍ

ພະນັກງານໂຄງການຄອນເນັກຊັນ ເຊື່ອວ່າພວກນັກຮຽນເຂົ້າໃຈຄູນຄ່າຂອງການສຶກສາ ແລະ ທີ່ເຂົາເຈົ້າໂຮງຮຽນໄປນັ້ນກໍ່ຍ້ອນວ່າບໍ່ໄດ້ຮັບການຊ່ວຍເຫລືອທີ່ຈຳເປັນເພື່ອສ້າງຄວາມສຳເຣັດ. ການທີ່ຂາດຄວາມຊ່ວຍເຫລືອນີ້ແມ່ນມາຈາກຫລາຍພາກສ່ວນ, ບາງຄັ້ງຮວມທັງ ທາງໂຮງຮຽນ ຫລື ທາງບ້ານຂອງນັກຮຽນ. ຖ້າທ່ານມີເດັກ ຫລື ຮູ້ຈັກເດັກຜູ້ໃດບໍ່ໄປເຂົ້າໂຮງຮຽນ ຫລື ທີ່ຕ້ອງການຄືນເຂົ້າໂຮງຮຽນ, ແຕ່ມີຂໍ້ຫຍຸ້ງຍາກນັ້ນ, ຂໍໃຫ້ຕິດຕໍ່ຫາໂຄງການຄອນເນັກຊັນ.

ປັດຈຸບັນໂຄງການ CONNECTIONS) ຕັ້ງຢູ່ໃນ **Harold V. Ballard Parent Center** (ແຕ່ກ່ອນເປັນໂຮງຮຽນປະຖົມຟຣີມອນ)

ເພື່ອລາຍລະອຽດຕິດຕໍ່ຫາ: **CONNECTIONS Drop Out Recovery Program: (619) 574-0535**
**Media inquires: (619) 725-5578**

**www.sandi.net**
***revised 10/20/05***

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນການສຶກສາແຊນດິເອໂກເປັນສູນການໃຫຍ່ທີ່ສຸດທີສອງໃນຣັຖຄາລີຟໍເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 15,800 ຄົນ.) ສູນການສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ ແລະ ວິຊາເລກໃນຊັ້ນຮຽນກຽມອະນຸບານເຖິງປີທີ 12. ສູນການສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄູອາຈານ, ແລະ ຊຸມຊົນ."

"ພາລະໜ້າທີ່ຂອງໂຮງຮຽນສູນການສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.

*XK., 02/28/06 Factsheet, CONNECTIONS Dropout Recovery Program /Lao Version*